ຂ່າວ
NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຈັດກອງປະຊຸມສຳມະນາແລກປ່ຽນຄວາມຮູ້ ກ່ຽວກັບຜະລິດຕະພັນການຊຳລະຂອງ ສປ. ຈີນ



ໃນຕອນເຊົ້າຂອງວັນທີ 10 ເມສາ 2019 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມສຳມະນາແລກປ່ຽນຄວາມຮູ້ກ່ຽວກັບຜະລິດຕະພັນ ແລະ Platform ການຊຳລະຂອງບໍລິສັດ Alipay, ພາຍໃຕ້ການເປັນປະທານຂອງ ທ່ານ ສຸລິສັກ ທຳນຸວົງ ວ່າການຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ ທຫລ, ພ້ອມດ້ວຍຜູ້ເຂົ້າຮ່ວມຈາກບັນດາກົມທີ່ກ່ຽວຂ້ອງຂອງ ທຫລ, ທະນາຄານທຸລະກິດລັດ ແລະ ນັກວິທະຍາກອນທີ່ມາຈາກບໍລິສັດທີ່ໃຫ້ບໍລິການທາງດ້ານການເງິນຂະໜາດໃຫຍ່ຂອງປະເທດ ສປ. ຈີນ ຄື: ບໍລິສັດ Alipay, ບໍລິສັດ ANT financial ແລະ ກຸ່ມບໍລິສັດ Alibaba, ລວມຈຳນວນຜູ້ເຂົ້າຮ່ວມປະມານ 30 ກວ່າຄົນ.

ການຈັດກອງປະຊຸມສຳມະນາແລກປ່ຽນຄວາມຮູ້ໃນຄັ້ງນີ້ກໍ່ເພື່ອຍົກລະດັບຄວາມຮູ້ກ່ຽວກັບ Alipay, ANT financial ແລະ ກຸ່ມບໍລິສັດ Alibaba, ເປັນການແລກປ່ຽນທັດສະນະກ່ຽວກັບມາດຕະຖານຄິວອາໂຄດ (QR Code) ຂອງ Alipay, ປະສົບການໃນການເຮັດທຸລະກິດຂອງບໍລິສັດດັ່ງກ່າວຮ່ວມກັບບັນດາທະນາຄານກາງຂອງປະເທດອື່ນໆທີ່ຢູ່ໃກ້ຄຽງ ສປປ ລາວ, ການປະຕິບັດຕາມມາດຕະຖານຂອງ Alipay QR Code (Compliance Standard) ແລະ ສາຍສຳພັນລະຫວ່າງບໍລິສັດດັ່ງກ່າວຕໍ່ຄູ່ຮ່ວມທຸລະກິດໃນ ສປປ ລາວ ແລະ ພາກພື້ນ. ເຊິ່ງກໍ່ເປັນໂອກາດອັນດີຂອງທະນາຄານແຫ່ງ ສປປ ລາວ ທີ່ໄດ້ແລກປ່ຽນຄວາມຮູ້ ແລະ ແລະ ເພື່ອເປັນການຍົກລະດັບຄວາມເຂົ້າໃຈຕໍ່ມາດຕະຖານຂອງ Alipay QR Code ເພື່ອຂະຫຍາຍໂອກາດໃນການຮ່ວມມືເຮັດທຸລະກິດການຊຳລະໃນອານາຄົດຮ່ວມກັບ ສປປ ລາວ. ໃນນີ້ ບໍລິສັດ Alipay ເປັນບໍລິສັດລູກທີ່ຖືກສ້າງຂຶ້ນມາຈາກບໍລິສັດແມ່ກໍ່ຄືກຸ່ມບໍລິສັດ Alibaba (ບໍລິສັດທີ່ໃຫ້ບໍລິການຊື້-ຂາຍສິນຄ້າຜ່ານທາງເຄືອຂ່າຍອິນເຕີເນັດອອນລາຍທີ່ໃຫຍ່ທີ່ສຸດໃນປະເທດ ສປ. ຈີນ) ເພື່ອເປັນເຄື່ອງມືອຳນວຍຄວາມສະດວກໃຫ້ແກ່ຜູ້ຊື້ ແລະ ຜູ້ຂາຍ ໃນການຊຳລະຄ່າສິນຄ້າ ແລະ ການເຮັດທຸລະກຳທາງດ້ານການເງິນອື່ນໆໃນລະບົບອອນ

ລາຍ ແລະ ບໍລິຫານຈັດການຄຸ້ມຄອງລະບົບໂດຍບໍລິສັດ ANT Financial, ຜູ້ໃຊ້ບໍລິການສາມາດຊໍາລະຄ່າສິນຄ້າ ແລະ ບໍລິການຕ່າງໆ ດ້ວຍວິທີການສະແກນ "ຄິວອາໂຄດ" (QR Code) ຈາກບັນດາຮ້ານຄ້າຜ່ານທາງໂທລະສັບມືຖືໄດ້ຢ່າງສະດວກສະບາຍ.








# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.

ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ